# ພິທີເຊັນບົດບັນທຶກຄວາມເຂົ້າໃຈ

# ລະຫວ່າງ

# ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ

# ແລະ ກົມຕຳຫຼວດເສດຖະກິດ, ກະຊວງປ້ອງກັນຄວາມສະຫງົບ




ໃນວັນທີ 8 ທັນວາ 2021 ຜ່ານມານີ້, ທີ່ທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ກົມນະໂຍບາຍເງິນຕາ (ກນງ), ທະນາຄານແຫ່ງ ສປປ ລາວ ແລະ ກົມຕຳຫຼວດເສດຖະກິດ (302), ກົມໃຫຍ່ຕຳຫຼວດ, ກະຊວງປ້ອງກັນຄວາມສະຫງົບ, ຊຶ່ງລົງນາມໂດຍ ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ, ຫົວໜ້າກົມນະໂຍບາຍເງິນຕາ ທຫລ ແລະ ທ່ານ ພັອ ບຸນອ້ອມ ໄຊຍະວົງ, ຫົວໜ້າກົມຕຳຫຼວດເສດຖະກິດ, ກົມໃຫຍ່ຕຳຫຼວດ, ປກສ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ນອກຈາກນີ້, ຍັງປະກອບມີຄະນະກົມຈາກສອງຝ່າຍ ແລະ ພະນັກງານພາຍໃນ ທຫລ ເຂົ້າຮ່ວມ.

ຈຸດປະສົງຂອງການເຊັນບົດບັນທຶກຄວາມຄວາມເຂົ້າໃຈໃນຄັ້ງນີ້, ແມ່ນເພື່ອປະສານສົມທົບການຮ່ວມມືຊຶ່ງກັນ ແລະ ກັນລະຫວ່າງ ກນງ ແລະ 302 ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ ໃຫ້ໄດ້

ຮັບຜົນດີ, ຊຶ່ງເປັນການຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014 ຕາມພາລະບົດບາດທີ່ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບດັ່ງກ່າວ; ພ້ອມທັງມີການກຳນົດຫຼັກການ, ກົນໄກ ແລະ ວິທີການປະສານສົມທົບໃນການຕິດຕາມກວດກາການເຄື່ອນໄຫວ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການນຳໃຊ້ຂໍ້ມູນທີ່ພົວພັນກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ; ສ້າງໃຫ້ມີການພົວພັນ, ປະສານງານ ແລະ ຮ່ວມມືຢ່າງເປັນລະບົບວ່ອງໄວ ແລະ ແກ້ໄຂໃຫ້ທັນກັບສະພາບການ; ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ເພີ່ມທະວີການຮ່ວມມືລະຫວ່າງ 2 ຂະແໜງການໃນວຽກງານຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີຄວາມໜັກແໜ້ນຍິ່ງຂຶ້ນ.

*//ຂ່າວໂດຍ: ກົມນະໂຍບາຍເງິນຕາ*

*ຮຽບຮຽງຂ່າວ-ພາບ: ທ ສົມພິດ ທຳມະວົງ*

*ຢູ່ເມືອງລາວ ໃຊ້ເງິນກີບລາວ*